ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

***************************

ສານປະຊາຊົນສູງສຸດ

ເລກທີ ..໔໔../ສປສສ

ນະຄອນຫລວງວຽງຈັນ, ວັນທີ ..໒໕../..8../ 2010

# ຄຳແນະນຳ

## ຂອງທ່ານປະທານສານປະຊາຊົນສູງສຸດ

ເຖິງ: ທ່ານບັນດາທ່ານປະທານສານປະຊາຊົນທ້ອງຖິ່ນ

ເລື່ອງ: ຄະນະສານຢູ່ໃນສານປະຊາຊົນເຂດ

ອີງຕາມ ມາດຕາ 34 ຂອງກົດໝາຍວ່າດ້ວຍສານປະຊາຊົນ ສະບັບເລກທີ 09/ສພຊ ລົງວັນທີ 26 ພະຈິກ 2009;

ອີງຕາມ ການຕົກລົງຂອງກອງປະຊຸມສະພາຜູ້ພິພາກສາ ຄັ້ງວັນທີ 28 ພຶດສະພາ 2010;

ສານປະຊາຊົນເຂດ ໄດ້ຮັບການສ້າງຕັ້ງຕາມມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 113/ຄປຈ ລົງວັນທີ 28 ພຶດສະພາ 2009 ແລະ ຕາມກົດໝາຍວ່າດ້ວຍສານປະຊາຊົນ ສະບັບທີ 09/ສພຊ ລົງວັນທີ 26 ພະຈິກ 2009 ຊຶ່ງອີງຕາມມາດຕາ 34 ຂອງກົດໝາຍ ວ່າດ້ວຍສານປະຊາຊົນສະບັບດັ່ງກ່າວ ໄດ້ກຳນົດກ່ຽວກັບຄະນະສານຂອງສານປະຊາຊົນເຂດວ່າມີ ຄະນະສານອາຍາ, ແພ່ງ ແລະ ຄະນະສານອື່ນ ຊຶ່ງເຫັນວ່າບໍ່ລະອຽດຈະແຈ້ງ ພາໃຫ້ມີຄວາມເຂົ້າໃຈ ແລະ ປະຕິບັດບໍ່ເປັນເອກະພາບກັນ; ຊຶ່ງສານປະຊາຊົນຫລາຍແຫ່ງມີຄວາມເຂົ້າໃຈວ່າ ຄະນະສານຢູ່ສານປະຊາຊົນເຂດ ມີພຽງຄະນະສານແພ່ງ ແລະ ຄະນະສານອາຍາ ເທົ່ານັ້ນ;

ສະນັ້ນ ເພື່ອໃຫ້ມີຄວາມເຂົ້າໃຈ ແລະ ປະຕິບັດຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ; ປະທານສານປະຊາຊົນສູງສຸດ ຈຶ່ງອອກຄຳແນະນຳ:

1. ໃຫ້ສານປະຊາຊົນເຂດ ມີ 3 ຄະນະສານ ຄື: ຄະນະສານອາຍາ, ຄະນະສານແພ່ງ ແລະ ຄະນະສານຄອບຄົວ;

2. ຄະດີ ຄອບຄົວ ໃຫ້ນຳມາພິຈາລະນາເປັນຂັ້ນຕົ້ນຢູ່ສານປະຊາຊົນເຂດ ເວັ້ນເສັຍແຕ່ຄະດີຄອບຄົວທີ່ມີຂໍ້ຂັດແຍ່ງ ມູນຄ່າເກີນ 300 ລ້ານກີບ ໃຫ້ນຳມາພິຈາລະນາເປັນຂັ້ນຕົ້ນ ຢູ່ສານປະຊາຊົນແຂວງ, ນະຄອນ;
3. ຄະດີການຄ້າ ທຸກປະເພດ ເຖິງຈະມີຂໍ້ຂັດແຍ່ງ ມູນຄ່າຕ່ຳກວ່າ 300 ລ້ານກີບລົງມາກໍຕາມ ແມ່ນໃຫ້ນຳມາພິຈາລະນາເປັນຂັ້ນຕົ້ນ ຢູ່ສານປະຊາຊົນແຂວງ, ນະຄອນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 49 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ;
4. ຄະດີເດັກ ແມ່ນໃຫ້ດຳເນີນເປັນຂັ້ນຕົ້ນຢູ່ຂັ້ນແຂວງ, ນະຄອນ ຕາມທີ່ກຳນົດໄວ້ໃນມາດຕາ 68 ຂອງກົດໝາຍວ່າດ້ວຍການປົກປ້ອງສິດ ຜົນປະໂຫຍດຂອງເດັກ ແລະ ມາດຕາ 24 ແລະ 25 ຂອງກົດໝາຍວ່າດ້ວຍສານປະຊາຊົນ.

ດັ່ງນັ້ນ ຈຶ່ງແນະນຳມາຍັງທ່ານ ເພື່ອມີຄວາມເຂົ້າໃຈເປັນເອກະພາບ ແລະ ຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ສອດຄ່ອງ ຕາມທີ່ກຳນົດໄວ້ໃນກົດໝາຍ.

ໃນພາກປະຕິບັດຕົວຈິງ ຖ້າເຫັນວ່າມີຂໍ້ຫຍຸ້ງຍາກແນວໃດ ໃຫ້ລາຍງານຫາສານປະຊາຊົນສູງສຸດ ເພື່ອຄົ້ນຄວ້າພິຈາລະນາແກ້ໄຂ.

ປະທານສານປະຊາຊົນສູງສຸດ,

ຄຳມີ ໄຊຍະວົງ

ບ່ອນສົ່ງ:
- ກຳມາທິການກົດໝາຍ ສະພາແຫ່ງຊາດ ... ເພື່ອລາຍງານ
- ອົງການໄອຍະການປະຊາຊົນສູງສຸດ...ເພື່ອກວດກາ
- ສຳເນົາໄວ້ ... 02 ສະບັບ



ບຸນຍວງ ໜະວິສັກ.doc